Lao
(ພາສາລາວ)

# ຫ້ອງການຜູ້ປົກຄອງການສຶກສາຂອງສາທາລະນະຊົນ (OSPI)
## ການສຳຣວດພາສາຢູ່ເຮືອນ

| | | |
|---|---|---|
| ຊື່ນັກຮຽນ: | | ວັນທີ: |
| ວັນເດືອນປີເກີດ: | ເພດ: | ຊັ້ນຮຽນ: |

**ປະກອບຟອມໂດຍ:**
ຊື່ພໍ່ແມ່/ຜູ້ປົກຄອງ ______________________ ຄວາມສັມພັນນຳນັກຮຽນ ______________
ລາຍເຊັນພໍ່ແມ່/ຜູ້ປົກຄອງ ______________________________________________

ຖ້າມີຄວາມເປັນໄປໄດ້, ທ່ານຢາກໃຫ້ເຮັດການຕິດຕໍ່ຈາກທາງໂຮງຮຽນຫາທ່ານເປັນພາສາໃດ?

______________________________________________________________

**ລູກຂອງທ່ານໄດ້ຮັບການຊ່ວຍເຫລືອພັດທະນາພາສາອັງກິດຜ່ານໂຄງການສອນສອງພາສາຣະຍະຫັນປ່ຽນຢູ່ໃນໂຮງຮຽນປີຜ່ານມາທີ່ລູກຂອງທ່ານໄດ້ເຂົ້າຮຽນບໍ່?** ໄດ້ຮັບ__ ບໍ່ໄດ້ຮັບ__ ບໍ່ຮູ້ຈັກ__

| | |
|---|---|
| 1. ລູກຂອງທ່ານເກີດຢູ່ປະເທດໃດ? | ____________________ |
| 2. **ພາສາໃດທີ່ລູກຂອງທ່ານຮຽນເວົ້າເປັນພາສາທຳອິດ?*** | ____________________ |
| 3. **ພາສາໃດທີ່ ລູກຂອງທ່ານ ໃຊ້ຢູ່ໃນບ້ານເປັນສ່ວນໃຫຍ່?*** | ____________________ |
| 4. ພາສາໃດທີ່ ພໍ່ແມ່/ຜູ້ປົກຄອງ ໃຊ້ເປັນສ່ວນໃຫຍ່ເມື່ອລົມກັບລູກຂອງທ່ານ? | ____________________<br>____________________ |
| 5. ລູກຂອງທ່ານເຄີຍໄດ້ຮັບການສຶກສາທາງການ*ຢູ່ນອກສະຫະຣັດອະເມຣິກາມາກ່ອນບໍ່?<br>(ຫ້ອງອະນຸບານ – ຊັ້ນ 12th )<br>_______ເຄີຍ _______ບໍ່ເຄີຍ<br>"ການສຶກສາທາງການ" ຢ່າລວມເອົາສູນອົບພະຍົບ ຫລື ໂຄງການສຳລັບເດັກນ້ອຍທີ່ບໍ່ເຊື່ອຖືໄດ້. | ຖ້າເຄີຍ, ໄດ້ຮັບການສອນເປັນພາສາໃດແດ່?<br>____________________<br>ເປັນເວລາຈັກເດືອນ?_____ |
| 6. **ລູກຫຼານຂອງທ່ານເຂົ້າໂຮງຮຽນໃນສະຫະຣັຖອາເມລິກາຄັ້ງທຳອິດເມື່ອໃດ?** (ອະນຸບານ – ເກຣດ 12) | ____________________<br>ເດືອນ ວັນ ປີ |

***WAC 392-160-005:** *"ພາສາຕົ້ນຕໍ" ຫມາຍເຖິງພາສາທີ່ນັກຮຽນໃຊ້ເລື້ອຍທີ່ສຸດ (ບໍ່ຈຳເປັນຕ້ອງແມ່ນພໍ່ແມ່, ຜູ້ປົກຄອງ, ຫລື ຜູ້ອື່ນໆ) ເພື່ອການຕິດຕໍ່ຢູ່ໃນສະຖານທີ່ອາສັຍຂອງນັກຮຽນ.*
Note to district: A response of a language other than English to question #2 OR question #3 triggers ELL placement testing.

# ຈຸດປະສົງຂອງການສຳຣວດພາສາຢູ່ເຮືອນ

ການສຳຣວດພາສາຢູ່ເຮືອນໄດ້ຖືກເອົາໃຫ້ນັກຮຽນ *ທຸກໆຄົນ* ຜູ້ທີ່ຈົດຊື່ເຂົ້າໃນໂຮງຮຽນຂອງຣັດວໍຊິງຕັນ. ຣາຍລະອຽດຕໍ່ລົງໄປນີ້ຈະຊ່ວຍຕອບຄຳຖາມບາງອັນທີ່ທ່ານອາດຈະມີຢູ່ກ່ຽວກັບຟອມໃບນີ້.

## ຈຸດປະສົງຂອງການສຳຣວດພາສາຢູ່ເຮືອນແມ່ນຫຍັງ?

ຈຸດປະສົງຕົ້ນຕໍຂອງການສຳຣວດພາສາຢູ່ເຮືອນແມ່ນເພື່ອຈະຊ່ວຍຊີ້ຕົວນັກຮຽນຜູ້ທີ່ອາດຈະມີເງື່ອນໄຂໄດ້ຮັບການອູ້ມຊູເພື່ອຈະຊ່ວຍເຂົາເຈົ້າພັດທະນາຄວາມຊຳນານໃນພາສາອັງກິດທີ່ຈຳເປັນສຳລັບຄວາມສຳເຣັດຢູ່ໃນຫ້ອງຮຽນ ແລະ ຜູ້ທີ່ອາດຈະມີເງື່ອນໄຂໄດ້ຮັບການບໍຣິການຢ່າງອື່ນ. ມັນສຳຄັນທີ່ວ່າຣາຍລະອຽດອັນນີ້ຈະຖືກບັນທຶກໄວ້ຢ່າງຖືກຕ້ອງຍ້ອນວ່າມັນສາມາດສະທ້ອນເຖິງເງື່ອນໄຂໄດ້ຮັບຂອງນັກຮຽນສຳລັບການບໍຣິການທີ່ເຂົາເຈົ້າຕ້ອງການເພື່ອຈະມີຜົນສຳເຣັດຢູ່ໃນໂຮງຮຽນ. ການສອບເສັງອາດຈະຈຳເປັນຕ້ອງໄດ້ເຣັດເພື່ອຈະພິຈາຣະນາເບິ່ງວ່າການອູ້ມຊູດ້ານພາສາ ແລະ ການສຶກສາເພີ້ມເຕີມແນວໃດແມ່ນຕ້ອງການ ຫລື ບໍ່. ຈະບໍ່ມີນັກຮຽນຄົນໃດຈະຖືກຈັດໃສ່ໂຄງການພັດທະນາພາສາອັງກິດໂດຍອີງໃສ່ຄຳຕອບຕໍ່ຟອມໃບນີ້ເທົ່ານັ້ນ.

## ເປັນຫຍັງທ່ານຈຶ່ງຖາມກ່ຽວກັບພາສາທຳອິດ ແລະ ພາສາທີ່ຖືກໃຊ້ຢູ່ໃນເຮືອນຂອງນັກຮຽນ?

ຄຳຖາມສອງອັນກ່ຽວກັບພາສາຂອງນັກຮຽນຊ່ວຍພວກເຮົາໃຫ້ພິຈາຣະນາເບິ່ງວ່າ:

- ນັກຮຽນຂອງທ່ານຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອນຳການຮຽນພາສາອັງກິດ ຫລື ບໍ່, ແລະ
- ພະນັກງານຢູ່ໂຮງຮຽນຄວນຈະຮູ້ຈັກ ຫລື ບໍ່ ກ່ຽວກັບພາສາອື່ນທີ່ຖືກໃຊ້ໂດຍນັກຮຽນຢູ່ເຮືອນ.

ພາສາທີ່ລູກຂອງທ່ານຮຽນເທື່ອທຳອິດອາດຈະແຕກຕ່າງຈາກພາສາທີ່ລູກຂອງທ່ານໃຊ້ສຳລັບການຕິດຕໍ່ກັນຢູ່ເຮືອນດຽວນີ້.ຄຳຕອບຕໍ່ຄຳຖາມອັນນີ້ທັງສອງອັນຈະຊ່ວຍເຫລືອໂຮງຮຽນໃນການເອົາການສຶກສາທີ່ເຫມາະສົມໃຫ້ຕໍ່ຄວາມຕ້ອງການຂອງນັກຮຽນສ່ວນບຸກຄົນລວມທັງຄວາມຕ້ອງການດ້ານການຕິດຕໍ່ກັນຊຶ່ງອາດຈະມີຂື້ນ. ນັກຮຽນຜູ້ທີ່ຮຽນທຳອິດພາສາອື່ນນອກຈາກພາສາອັງກິດຈະມີເງື່ອນໄຂໄດ້ຮັບການອູ້ມຊູເພີ້ມເຕີມ. ແມ້ແຕ່ນັກຮຽນຜູ້ທີ່ເວົ້າພາສາອັງກິດເກ່ງອາດຈະຍັງຕ້ອງການການອູ້ມຊູໃນການພັດທະນາຄວາມຊຳນານດ້ານພາສາຊຶ່ງຕ້ອງການເພື່ອຈະມີຜົນສຳເຣັດຢູ່ໃນໂຮງຮຽນ.

## ເປັນຫຍັງທ່ານຈຶ່ງຖາມວ່ານັກຮຽນເກີດຢູ່ໃສ?

ຣາຍລະອຽດອັນນີ້ຊ່ວຍໃຫ້ຫມວດໂຮງຮຽນ ແລະ ຣັດພິຈາຣະນາເບິ່ງວ່ານັກຮຽນສອດຄ່ອງນຳການຕີຄວາມຫມາຍຂອງຄົນເຂົ້າເມືອງມາຕັ້ງຖິ່ນຖານ ຫລື ບໍ່ ສຳລັບຈຸດປະສົງຂອງການອອກເງິນທຶນຂອງຣັດຖະບານກາງ. ອັນນີ້ຈະກ່ຽວຂ້ອງນຳເຖິງແມ່ນວ່າເມື່ອເວລາພໍ່ແມ່ຂອງນັກຮຽນເປັນຄົນສັນຊາດ US ທັງສອງຄົນ, ແຕ່ວ່ານັກຮຽນເກີດຢູ່ນອກສະຫາຣັດອະເມຣິກາ. ຟອມໃບນີ້ຈະບໍ່ຖືກໃຊ້ເພື່ອຈະຊີ້ບອກນັກຮຽນຜູ້ທີ່ອາດຈະເປັນຄົນບໍ່ມີເອກສານ.

## ເປັນຫຍັງທ່ານຈຶ່ງຖາມກ່ຽວກັບການສຶກສາຜ່ານມາຂອງນັກຮຽນຂອງຂ້າພະເຈົ້າ?

ຣາຍລະອຽດກ່ຽວກັບການສຶກສາຂອງນັກຮຽນຈະຊ່ວຍຮັບປະກັນວ່າການສຶກສາຂອງນັກຮຽນທັງພາຍໃນ ແລະ ພາຍນອກສະຫາຣັດອະເມຣິກາໄດ້ຖືກພິຈາຣະນາໃສ່ໃນການແນະນຳຕ່າງໆທີ່ຖືກເຣັດອອກມາສຳລັບການເຂົ້າຮ່ວມ ແລະ ການບໍຣິການຂອງຫມວດໂຮງຮຽນ. ເບື້ອງຫລັງການສຶກສາຂອງນັກຮຽນຍັງຈະເປັນຣາຍລະອຽດອັນສຳຄັນອີກຄືກັນເພື່ອຈະຊ່ວຍພິຈາຣະນາອອກມາວ່ານັກຮຽນໄດ້ເຣັດຄວາມຄືບຫນ້າດີພໍ ຫລື ບໍ່ ໄປໃສ່ມາດຕະຖານຂອງຣັດໂດຍອີງຕາມເບື້ອງຫລັງການສຶກສາແຕ່ກ່ອນຂອງເຂົາເຈົ້າ.

ຂໍຂອບໃຈສຳລັບການເອົາຣາຍລະອຽດໃຫ້ຊຶ່ງຕ້ອງການຢູ່ໃນການສຳຣວດພາສາຢູ່ເຮືອນ. ຈົ່ງຕິດຕໍ່ຫາຫມວດໂຮງຮຽນຂອງທ່ານຖ້າຫາກວ່າທ່ານມີຄຳຖາມຕໍ່ໄປອີກກ່ຽວກັບຟອມໃບນີ້ ຫລື ກ່ຽວກັບການບໍຣິການທີ່ມີໄວ້ໃຫ້ຢູ່ທີ່ໂຮງຮຽນຂອງລູກຂອງທ່ານ.